# ການສັກຢາ ປ້ອງກັນໂຣຄຕັບ-ບີ (HBV)

## ສິ່ງທີ່ທ່ານຄວນຮູ້ຈັກ

---

**໑. ໂຣຄຕັບ-ບີ (HBV) ແມ່ນຫຍັງ?**

ໂຣຄຕັບ-ບີ ແມ່ນໂຣຄທີ່ຮ້າຍແຮງທີ່ທຳຮ້າຍຕັບ ຊຶ່ງເກີດມາຈາກເຊື້ອໂຣຄຕັບ-ບີ ທີ່ເອີ້ນວ່າ (HBV). ໂຣຄຕັບ (HBV) ນີ້ ອາຈມີອາການດັ່ງຕໍ່ລົງໄປນີ້:

ອາການໄຂ້ຊື່ວລະຍະສັ້ນ. ຊຶ່ງເຮັດໃຫ້ກິນເຂົ້າບໍ່ແຊບ, ເມື່ອຍ, ເຈັບຕາມກ້າມເນື້ອ, ຄໍ່ ແຂນຂາ ແລະເຈັບກະເພາະ, ເຈັບທ້ອງ ແລະຮາກ, ໄຂ້ ຜິວຫນັງ ແລະຕາ ເຫລືອງ.

ສຳຫລັບຜູ້ໃຫ່ຍ ສ່ວນຫລາຍແມ່ນມີອາການ ເປັນໄຂ້. ເດັກນ້ອຍທີ່ເປັນໂຣຄນີ້ ສ່ວນຫລາຍຈະບໍ່ມີອາການເປັນໄຂ້. ແຕ່ມີຜົນສະທ້ອນ ໃນຣະຍະຍາວນານ: ບາງຄົນໃຊ້ເວລາຣະຍະຍາວຈຶ່ງຈະປາກົດເຫັນໂຣຄ (HBV) ດັ່ງກ່າວນີ້. ນີ້ເປັນອັນຕະລາຍຫລາຍ ຊຶ່ງສາມາດເຮັດໃຫ້ ຕັບມີການເສັຍຫາຍ (ເປັນຕັບແຂງ) ເປັນມະເຮັງໃນຕັບ ແລະເສັຍຊີວິດ. ໂຣຄຊຳເຮື້ອນີ້ ສ່ວນຫລາຍແມ່ນເກີດກັບເດັກນ້ອຍ ຫຼາຍກ່ວາຜູ້ໃຫ່ຍ. ຜູ້ທີ່ມີໂຣຄ (HBV) ດັ່ງກ່າວນີ້ສາມາດແປດຄົນອື່ນໄດ້ ເຖິງວ່າຈະເບິ່ງບໍ່ມີອາການຜິດປົກກະຕິກໍ່ຕາມ.

- ໃນປີ ໒໐໐໕ ມີຜູ້ໃຫ່ຍ ໕໑,໐໐໐ ຄົນຕິດໂຣຄຕັບ-ບີ (HBV) ນີ້.
- ປະມານ ໑.໒໕ ລ້ານຄົນໃນປະເທດອາເມຣິການຕິດໂຣຄຕັບ-ບີ (HBV) ນີ້.
- ແຕ່ລະປີ ມີຄົນເສັຍຊີວິດປະມານ ໓໐໐໐-໕໐໐໐ ຄົນ ຈາກໂຣຄຕັບແຂງຊຶ່ງເນື່ອງມາຈາກ (HBV) ນີ້.

ເຊື້ອໂຣຄຕັບ-ບີ ນີ້ຕິດແປດກັນໂດຍທາງເລືອດ ແລະສິ່ງທີ່ເປັນເຊື້ອນ້ຳອອກມາຈາກຮ່າງກາຍຂອງຄົນທີ່ເປັນໂຣຄນີ້. ການຕິດແປດຂອງເຊື້ອໂຣຄນີ້ເຊັ່ນ:

ລູກນ້ອຍອາຈຕິດແປດຈາກແມ່ ເມື່ອເວລາເກີດອອກມາ. ອາຈຕິດແປດຈາກການສຳພັດໂດຍເລືອດທີ່ອອກມາຈາກບາດແຜ ຫລືຜິວຫນັງຂອງຄົນທີ່ມີໂຣຄນີ້. ອາຈຕິດແປດກັນຈາກເລືອດ ເຊັ່ນໃຊ້ໄມ້ຖູພັນ ຫຼືມີດແຖຫນວດຮ່ວມກັນ, ການຮ່ວມເພດ ໂດຍບໍ່ໃຊ້ຂອງປ້ອງກັນ, ໃຊ້ເຂັມສັກຢາຮ່ວມກັນກັບຜູ້ທີ່ມີເຊື້ອໂຣຄນີ້.

**໒. ການສັກຢາປ້ອງກັນໂຣຄຕັບ-ບີ (HBV) ເປັນຫຍັງເຮົາຈຶ່ງສັກຢາປ້ອງກັນ?**

ການສັກຢາປ້ອງກັນໂຣຄຕັບ-ບີ (HBV) ສາມາດປ້ອງກັນໂຣຄຕັບ-ບີ (HBV) ແລະຜົນສະທ້ອນຈາກໂຣຄນີ້ເຊັ່ນເປັນມະເຮັງໃນຕັບ ແລະເປັນໂຣຄຕັບແຂງ. (liver cancer & cirrhosis) ການສັກຢາປ້ອງກັນໂຣຄຕັບ-ບີໃຫ້ແກ່ເດັກນ້ອຍນີ້ເລີ້ມແຕ່ປີ ໑໙໙໑. ຕັ້ງແຕ່ນັ້ນມາ ການລາຍງານກ່ຽວກັບເດັກນ້ອຍ ແລະຊາວນຸ່ມທີ່ຕິດໂຣຄຕັບ-ບີຊຳເຮື້ອນີ້ໄດ້ລົດນ້ອຍຖອຍລົງຫລາຍກ່ວາ ໙໕% ແລະ ໗໕% ຂອງຄົນທົ່ວໄປ. ຢາສັກປ້ອງກັນໂຣຄຕັບ-ບີ ນີ້ ຜລິດມາຈາກສ່ວນນຶ່ງຂອງເຊື້ອ (HBV) ຊຶ່ງເຮັດໃຫ້ ໂຣຄຕັບ-ບີນີ້ ບໍ່ເກີດຂື້ນມາໄດ້ອີກ. ການສັກຢາປ້ອງກັນໂຣຄຕັບ-ບີ (HBV) ນີ້ ຈະຕ້ອງສັກ ໓-໒ ເທື່ອລຽນກັນ. ການສັກຢາແບບນີ້ຈະເປັນວິທີທີ່ປ້ອງກັນຈາກການເປັນໂຣຄຕັບ-ບີ ໃນລະຍະຍາວ ອາຈຕລອດຊີວິດກໍ່ເປັນໄດ້.

**໓. ຜູ້ໃດຄວນສັກຢາປ້ອງກັນໂຣຄຕັບ-ບີ (HBV) ນີ້ ແລະຄວນສັກຢາມໃດ?**

ເດັກນ້ອຍ ແລະຊາວນຸ່ມ: ເດັກນ້ອຍເກີດໃຫ່ມ ຈະຕ້ອງສັກຢາປ້ອງກັນໂຣຄຕັບ-ບີ ນີ້ເມື່ອເວລາເຂົາເຈົ້າເກີດໃຫ່ມ ແລະ ຕ້ອງສັກໃຫ້ຄົບກຳນົດເມື່ອເວລາເຂົາເຈົ້າມີອາຍຸຢູ່ໃນຣະຫວ່າງ ໖-໑໘ ເດືອນ. ຊາວນຸ່ມຜູ້ທີ່ມີອາຍຸ ໑໘

ປີຂຶ້ນໄປ ທີ່ຍັງບໍ່ທັນໄດ້ສັກຢາປ້ອງໂຣຄນີ້ ເມື່ອເວລາເຂົາເຈົ້າຍັງນ້ອຍນັ້ນ ກໍ່ຄວນສັກຢາປ້ອງກັນໂຣຄນີ້ໄວ້ໄດ້.

**ຜູ້ໃຫ່ຍ:**

ຜູ້ໃຫ່ຍທີ່ຍັງບໍ່ທັນໄດ້ສັກຢາປ້ອງກັນໂຣຄ (HBV) ນີ້ ມີການສ່ຽງໄພຫຼາຍ ແລະຄວນຈະສັກຢາປ້ອງກັນນີ້ໄວ້. ການສ່ຽງໄພມີຄື:

- ການຢູ່ກັບເພື່ອນຮ່ວມເພດຜູ້ທີ່ມີເຊື້ອໂຣຄຕັບ-ບີ (HBV)
- ການຮ່ວມເພດກັບຜູ້ຊາຍຮ່ວມເພດກັບຜູ້ຊາຍ
- ບຸກຄົນທີ່ໃຊ້ເຂັມສັກຢາຮ່ວມກັນ
- ບຸກຄົນທີ່ຮ່ວມເພດກັບຫຼາຍຄົນ
- ບຸກຄົນຜູ້ທີ່ເປັນໂຣຄຕັບ ແລະເຈັບຫມາກໄຂ່ຫຼັງຊຳເຮື້ອ
- ບຸກຄົນຜູ້ທີ່ມີຫນ້າວຽກຈັບບາຍກັບເລືອດຄົນ
- ຕິດຕໍ່ກັບຄອບຄົວຂອງຄົນທີ່ເປັນໂຣຄຕັບ-ບີ (HBV)
- ຄົນເຈັບ ແລະພະນັກງານຂອງໂຮງຫມໍຄົນວິກົນຈິຕ
- ບຸກຄົນຜູ້ທີ່ຍັງມີອາການປິ່ນປົວຫມາກໄຂ່ຫລັງຢູ່
- ບຸກຄົນຜູ້ທີ່ຈະເດີນທາງໄປຍັງຕ່າງປະເທດທີ່ມີເຊື້ອໂຣຄຕັບ-ບີ (HBV).
- ບຸກຄົນທີ່ເປັນໂຣຄເອດ HIV

## ໔. ບຸກຄົນຜູ່ທີ່ບໍ່ຄວນສັກຢາປ້ອງກັນໂຣຄຕັບ-ບີ (HBV) ນີ້?

- ຜູ້ທີ່ມີອາການແພ້ທາດເບ້ຽງເຊົ້າຈີ່ ຫລືອາການແພ້ອື່ນໆ ຄວນແຈ້ງບອກທ່ານຫມໍຂອງທ່ານກ່ຽວກັບອາການແພ້ນີ້
- ບຸກຄົນຜູ້ທີ່ເຄີຍແພ້ຢານີ້ມາແຕ່ຄັ້ງກ່ອນແລ້ວ
- ບຸກຄົນຜູ້ທີ່ກຳລັງເປັນໄຂ້ຢູ່ ຄວນລໍຖ້າໃຫ້ດີແລ້ວຈຶ່ງສັກ ທາງໂຮງຫມໍອາຈມີຣາຍລະອຽດເພີ່ມຕື່ມ ໃຫ້ແກ່ທ່ານກ່ຽວກັບການສັກຢາປ້ອງກັນນີ້.

## ໕. ການສ່ຽງຂອງການສັກຢາປ້ອງກັນໂຣຄຕັບ-ບີ (HBV) ນີ້

ການສັກຢາປ້ອງກັນໂຣຄຕັບ-ບີນີ້ມີຄວາມປອດໄພຫຼາຍ. ຄົນສ່ວນຫຼາຍບໍ່ມີບັນຫາຫຍັງເລີຍກ່ຽວກັບການສັກຢານີ້.
ບັນຫາເລັກນ້ອຍທີ່ໄດ້ຮັບຈາກການສັກຢາ ຕາມລາຍງານຄື:
-ເຈັບປວດກ້າມເນື້ອທີ່ບ່ອນສັກຢາບາງເລັກນ້ອຍ (໑ ໃນຈຳນວນ ໔ ຄົນ)
- ອຸນຫະພຸມຮ່າງກາຍຂຶ້ນສູງເຖິງ ໙໙.໙ ˚F (໑ ໃນຈຳນວນ ໑໕ ຄົນ).
ອາການແພ້ທີ່ສາຫັດມີນ້ອຍທີ່ສຸດ. ອາການແພ້ອາຈມີພຽງນຶ່ງຄັ້ງ ໃນຈຳນວນ ໑.໑ ລ້ານເທື່ອ.
ຄົນຢູ່ໃນປະເທດອາເມຣິກາ ຫລາຍກວ່າ ໑໐໐ ລ້ານຄົນໄດ້ສັກຢາປ້ອງກັນໂຣຄຕັບ-ບີ ນີ້

**ຖ້າຂ້ອຍຫາກມີອາການແພ້ ຂ້ອຍຄວນເຮັດແນວໃດ?**

- ໃຫ້ໂທຣະສັບຫາທ່ານຫມໍໂດຍດ່ວນ
- ໃຫ້ບອກທ່ານຫມໍ ວັນເວລາທີ່ເຫດການເກີດຂຶ້ນ
- ໃຫ້ບອກທ່ານຫມໍ, ນາງແພດ ຫລືຫ້ອງການໂຮງພະຍາບານ ລາຍງານກ່ຽວກັບອາການແພ້ດັ່ງກ່າວ (VAERS)

ຫລືທ່ານຈະລາຍງານເອງກໍ່ໄດ້ທີ່ VAERS Website:
www.vaers.hhs.gov, ໂດຍທາງໂທຣະສັບ 1-800-822-7967

ແປຈາກພາສາອັງກລິສ ແລະພິມແຈກຢາຍໂດຍສະມາຄົມລາວ
ແຫ່ງຣັຖຄອນເນກຕິເຄດ

Lao Association of Connecticut, Inc.
P.O. Box 330513
West Hartford, CT 06133-0513
Tel. (860) 523-8340
Email: laoact@sbcglobal.net